**BE READY. STAY COVERED.**

# ຄຳຖາມທີ່ຖືກຖາມເລື້ອຍໆກ່ຽວກັບການຕໍ່ສັນຍາ Medicaid

*ປັບປຸງໃນເດືອນກັນຍາ 2023*

**ແມ່ນຫຍັງຄືການຕໍ່ສັນຍາ Medicaid?**

ກ່ອນໂຄວິດ-19, ລັດໄດ້ກວດສອບຂໍ້ມູນສະມາຊິກ Medicaid ທຸກໆປີ ເພື່ອໃຫ້ແນ່ໃຈວ່າພວກເຂົາຍັງມີສິດ. ຂະບວນການນີ້ແມ່ນເອີ້ນວ່າ "ການຕໍ່ສັນຍາ". ລັດຖະບານກາງໄດ້ລະງັບການຕໍ່ສັນຍາຊົ່ວຄາວໃນລະຫວ່າງໂຄວິດ-19 ເພື່ອໃຫ້ແນ່ໃຈວ່າປະຊາຊົນໄດ້ຮັບການຄຸ້ມຄອງສຸຂະພາບຂອງພວກເຂົາ. ເມື່ອພາວະສຸກເສີນດ້ານສາທາລະນະສຸກສິ້ນສຸດລົງ, ລັດຖະບານກາງໄດ້ກຳນົດໃຫ້ລັດຕ່າງໆເລີ່ມການຕໍ່ສັນຍາອີກຄັ້ງ. ລັດ Rhode Island ເລີ່ມຕໍ່ສັນຍາ Medicaid ອີກຄັ້ງໃນເດືອນເມສາ 2023. ຍ້ອນມີປະຊາຊົນໃນລັດ Rhode Island ຫຼາຍກວ່າ 350,000 ຄົນທີ່ລົງທະບຽນໃນ Medicaid, ທຸກຄົນຈະບໍ່ຖືກຕໍ່ສັນຍາພ້ອມກັນ. ແຈ້ງການຕໍ່ສັນຍາຈະສົ່ງໃຫ້ແກ່ປະຊາຊົນກຸ່ມຕ່າງໆໃນຕອນເລີ່ມຕົ້ນຂອງແຕ່ລະເດືອນ. ນັ້ນໝາຍຄວາມວ່າສະມາຊິກຈະໄດ້ຮັບແຈ້ງການທາງໄປສະນີຈາກລັດໃນລະຫວ່າງຕອນນີ້ ແລະ ເດືອນເມສາ 2024. ເຊັ່ນດຽວກັນກັບລັດອື່ນໆ, ລັດ Rhode Island ໄດ້ເລື່ອນເວລາການຕໍ່ສັນຍາສຳລັບຄົວເຮືອນທີ່ມີລູກ ເພື່ອເຮັດໃຫ້ມີເວລາຫຼາຍຂຶ້ນສຳລັບການພົວພັນທີ່ຕິດໄຕ່ຕອງ ແລະ ການບໍລິການສູ່ພາຍນອກ. ຖ້າເດັກໃນຄົວເຮືອນຂອງທ່ານລົງທະບຽນໃນ Medicaid, ທ່ານຈະໄດ້ຮັບແຈ້ງການລະຫວ່າງເດືອນທັນວາ 2023 ແລະ ເດືອນເມສາ 2024.

**ທຸກຄົນໃນຄົວເຮືອນຂອງຂ້າພະເຈົ້າຈະຖືກຕໍ່ສັນຍາພ້ອມກັນບໍ?**

ແມ່ນແລ້ວ, ສະມາຊິກ Medicaid ທີ່ຢູ່ອາໄສໃນຄົວເຮືອນດຽວກັນຈະຖືກຕໍ່ສັນຍາພ້ອມກັນ. ສະມາຊິກທຸກຄົນໃນຄົວເຮືອນຈະສະແດງຊື່ໃນແຈ້ງການດຽວ. ເຖິງຢ່າງໃດກໍ່ຕາມ, ສະມາຊິກຕ່າງໆໃນຄົວເຮືອນອາດໄດ້ຮັບການກວດສອບເງື່ອນໄຂສິດໃນຫຼາຍວິທີການທີ່ແຕກຕ່າງກັນ. ຕົວຢ່າງ: ລັດອາດຈຳເປັນຕ້ອງມີຂໍ້ມູນເພີ່ມເຕີມກ່ຽວກັບຜູ້ໃຫຍ່ໃນຄົວເຮືອນ ແລະ ຂໍເອກະສານ. ແຕ່ລັດອາດມີຂໍ້ມູນທີ່ພຽງພໍກ່ຽວກັບເດັກທີ່ອາຍຸຕ່ຳກວ່າ 19 ປີໃນຄົວເຮືອນ ເພື່ອຕໍ່ສັນຍາການຄຸ້ມຄອງເດັກໂດຍອັດຕະໂນມັດ.

## ຂ້າພະເຈົ້າສາມາດເຮັດຫຍັງເພື່ອກຽມພ້ອມ?

ມີສາມຢ່າງທີ່ທ່ານສາມາດເຮັດເພື່ອກຽມພ້ອມ ແລະ ຮັບການຄຸ້ມຄອງຕໍ່.

1. **ອັບເດດຂໍ້ມູນຕິດຕໍ່ຂອງທ່ານ.** ກວດໃຫ້ແນ່ໃຈວ່າລັດມີທີ່ຢູ່ປັດຈຸບັນ, ໝາຍເລກໂທລະສັບ ແລະ ອີເມວຂອງທ່ານ.
2. **ຄອຍຖ້າແຈ້ງການສີເຫຼືອງ ຫຼື ສີຂຽວຂອງທ່ານທາງໄປສະນີ.** ລັດອາດແຈ້ງໃຫ້ທ່ານຮັບຊາບວ່າການຄຸ້ມຄອງກຳລັງຖືກຕໍ່ສັນຍາໂດຍອັດຕະໂນມັດ ຫຼື ຈະຂໍຂໍ້ມູນເພີ່ມເຕີມຈາກທ່ານ.

3. **ດຳເນີນການໃນທັນທີ.** ກະລຸນາຍື່ນແບບຟອມທີ່ລົງລາຍເຊັນແລ້ວຂອງທ່ານ ແລະ ເອກະສານອື່ນໆທີ່ລັດຮ້ອງຂໍ ໃຫ້ໄວເທົ່າທີ່ເປັນໄປໄດ້. ທ່ານຕ້ອງສົ່ງເອກະສານຂອງທ່ານໃຫ້ພວກເຮົາພາຍໃນວັນທີທີ່ລະບຸໄວ້ໃນແຈ້ງການຂອງທ່ານ.

## ຂ້າພະເຈົ້າຈະສາມາດອັບເດດຂໍ້ມູນຕິດຕໍ່ຂອງຂ້າພະເຈົ້າໄດ້ແນວໃດ?

ທ່ານສາມາດອັບເດດຂໍ້ມູນຕິດຕໍ່ຂອງທ່ານດ້ວຍຫຼາຍວິທີ:

- **ທາງອອນລາຍ ຫຼື ໃນແອັບມືຖື**: ເຂົ້າເບິ່ງ healthyrhode.ri.gov ເພື່ອເຂົ້າເຖິງບັນຊີຂອງທ່ານຜ່ານອອນລາຍ ຫຼື ດາວໂຫຼດແອັບມືຖື HealthyRhode ເທິງສະມາດໂຟນຂອງທ່ານເພື່ອເຂົ້າເຖິງບັນຊີຂອງທ່ານ. HealthSource RI (HSRI) ຍັງຈັດການສົນທະນາສົດຜ່ານເວັບໃນລະຫວ່າງໂມງລັດຖະການທີ່ healthsourceri.com.
  - ສະມາຊິກທຸກຄົນຂອງ Medicaid ມີບັນຊີທີ່ສ້າງຂຶ້ນ ເມື່ອທ່ານຖືກອະນຸມັດສໍາລັບ Medicaid. ຖ້າທ່ານກໍາລັງຕິດຕັ້ງບັນຊີຂອງທ່ານເປັນຄັ້ງທໍາອິດ, ທ່ານສາມາດປ້ອນໝາຍເລກປະກັນສັງຄົມ ແລະ ວັນເດືອນປີເກີດຂອງທ່ານເພື່ອຂໍຊື່ຜູ້ໃຊ້ຂອງທ່ານ. ຈາກນັ້ນໃຫ້ປະຕິບັດຕາມຂັ້ນຕອນຕ່າງໆເພື່ອຕັ້ງຄ່າລະຫັດຜ່ານຂອງທ່ານໃໝ່.
- **ຕິດຕໍ່ກັບອົງການດູແລສຸຂະພາບທີ່ຢູ່ໃນການຄຸ້ມຄອງຂອງປະກັນສຸຂະພາບຂອງທ່ານ**: ທ່ານມີບັດປະກັນໄພຈາກ Neighborhood Health Plan of Rhode Island, Tufts Health Plan (RITogether) ຫຼື United Health Care Community Plan (UHCCP) ບໍ? ໂທຫາໝາຍເລກທີ່ຢູ່ດ້ານຫຼັງບັດຂອງທ່ານສໍາລັບການຊ່ວຍເຫຼືອເພື່ອອັບເດດຂໍ້ມູນຕິດຕໍ່ຂອງທ່ານ.
- **ທາງໂທລະສັບ**: ໂທຫາ HSRI ທີ່ໝາຍເລກ 1-855-840-4774 (ວັນຈັນຫາວັນສຸກ, ຍົກເວັ້ນມື້ພັກ, ຕັ້ງແຕ່ 8 ໂມງເຊົ້າ ຫາ 6 ໂມງແລງ).
- **ຊ່ອງໜ້າ**: ພະນັກງານຢູ່ສໍານັກງານ Rhode Island Department of Human Services (DHS) ສາມາດໃຫ້ການຊ່ວຍເຫຼືອແກ່ລູກຄ້າຊ່ອງໜ້າ. ສໍາລັບລາຍຊື່ຫ້ອງການ DHS, ໃຫ້ເຂົ້າເບິ່ງ dhs.ri.gov/about-us/dhs-offices.

## ເມື່ອໃດຈະຮອດເວລາທີ່ຂ້າພະເຈົ້າສາມາດຕໍ່ສັນຍາໄດ້?

ເພື່ອຄົ້ນຫາວັນທີຕໍ່ສັນຍາ Medicaid ທີ່ຄາດການຂອງທ່ານ, ໃຫ້ເຂົ້າສູ່ລະບົບບັນຊີຂອງທ່ານທີ່ healthyrhode.ri.gov ແລະ ຊອກຫາ "ຂໍ້ມູນການຕໍ່ສັນຍາຂອງຂ້າພະເຈົ້າ".

ນອກຈາກນັ້ນ, ລັດຈະສົ່ງແຈ້ງການໃຫ້ທ່ານທາງໄປສະນີພາຍໃນສອງເດືອນກ່ອນທີ່ທ່ານຈະຕ້ອງດໍາເນີນການຕໍ່ສັນຍາຂອງທ່ານໃຫ້ຄົບຖ້ວນ. ຕົວຢ່າງ: ຖ້າການຕໍ່ສັນຍາຂອງທ່ານຕ້ອງສໍາເລັດພາຍໃນທ້າຍເດືອນພຶດສະພາເພື່ອໃຫ້ສິດທິປະໂຫຍດຂອງທ່ານເລີ່ມຕົ້ນໃນເດືອນມິຖຸນາ, ທ່ານຈະໄດ້ຮັບແຈ້ງການຕໍ່ສັນຍາໃນເດືອນເມສາ. ແຈ້ງການດັ່ງກ່າວຈະບອກໃຫ້ທ່ານຮັບຊາບວ່າ Medicaid ຂອງທ່ານຈະຕໍ່ສັນຍາໂດຍອັດຕະໂນມັດ ຫຼື ບໍ່ ຫຼື ທ່ານຈໍາເປັນຕ້ອງໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບທ່ານ ຫຼື ຄົວເຮືອນຂອງທ່ານແກ່ລັດ ຫຼື ບໍ່. ນອກຈາກນັ້ນ, ແຈ້ງການດັ່ງກ່າວຈະບອກໃຫ້ທ່ານຮັບຊາບກໍານົດເວລາສໍາລັບການຍື່ນຊ່ອງເອກະສານການຕໍ່ສັນຍາທີ່ລົງລາຍເຊັນແລ້ວຂອງທ່ານ.

## ເປັນໄປບໍ່ທີ່ຂ້າພະເຈົ້າຈະບໍ່ໄດ້ຮັບແຈ້ງການໃນໄປສະນີເທື່ອກ່ຽວກັບການຕໍ່ສັນຍາການຄຸ້ມຄອງ Medicaid ຂອງຂ້າພະເຈົ້າ?

ທຸກຄົນທີ່ຈະໃຫ້ລັດກວດສອບເງື່ອນໄຂສິດ Medicaid ຂອງພວກເຂົາຄວນໄດ້ຮັບໜັງສືຕໍ່ສັນຍາ Medicaid ໃນເບື້ອງຕົ້ນໃນເດືອນມີນາ. ໜັງສືສະບັບນີ້ແຈ້ງໃຫ້ທ່ານຮັບຊາບກ່ຽວກັບຂະບວນການຕໍ່ສັນຍາ Medicaid ແລະ ມັນສຳຄັນສໍ່າໃດທີ່ຈະໃຫ້ແນ່ໃຈວ່າພວກເຮົາມີຂໍ້ມູນຕິດຕໍ່ທີ່ຖືກຕ້ອງສຳລັບທ່ານ.
ຖ້າທ່ານບໍ່ໄດ້ຮັບໜັງສືສະບັບນີ້ໃນກ່ອງໄປສະນີຂອງທ່ານ ຫຼື ໃນບັນຊີຂອງທ່ານທີ່ healthyrhode.ri.gov, ກະລຸນາກວດເບິ່ງຂໍ້ມູນຕິດຕໍ່ຂອງທ່ານໃນທັນທີ.
ລັດຈະສົ່ງແຈ້ງການເພີ່ມເຕີມໃຫ້ທ່ານທາງໄປສະນີ
ເມື່ອມັນຮອດຜຽນຂອງທ່ານໃນການຕໍ່ສັນຍາການຄຸ້ມຄອງຂອງທ່ານ.

**ຂ້າພະເຈົ້າຈະຂໍການຊ່ວຍເຫຼືອສຳລັບການຕໍ່ສັນຍາຂອງຂ້າພະເຈົ້າໄດ້ແນວໃດ?**
ການຊ່ວຍເຫຼືອແມ່ນມີໃຫ້ຊ່ອງໜ້າ, ຜ່ານໂທລະສັບ ແລະ ທາງອອນລາຍ. ເພື່ອຮຽນຮູ້ກ່ຽວກັບຕົວເລືອກເຫຼົ່ານີ້, ໃຫ້ເຂົ້າເບິ່ງ staycovered.ri.gov/medicaid-renewals/contact-us.

- ຜູ້ໃຫ້ຄຳປຶກສາ ແລະ ຜູ້ແນະນຳການສະໝັກທີ່ຜ່ານການຢັ້ງຢືນແລ້ວແມ່ນພ້ອມໃຫ້ການຊ່ວຍເຫຼືອຊ່ອງໜ້າໂດຍບໍ່ເສຍຄ່າ. ນອກຈາກນັ້ນ, ຫຼາຍອົງການທີ່ຕັ້ງໃນຊຸມຊົນຍັງສາມາດຊ່ວຍໃຫ້ທ່ານເຂົ້າໃຈແຈ້ງການຕໍ່ສັນຍາ Medicaid ຂອງທ່ານ ແລະ ຂັ້ນຕອນຖັດໄປ.
- ຖ້າທ່ານອາຍຸ 60 ປີຂຶ້ນໄປ ຫຼື ເປັນຜູ້ໃຫຍ່ທີ່ພິການ, ທ່ານສາມາດໂທຫາ Point, 401-462-4444. ຖ້າທ່ານອາຍຸ 65 ປີຂຶ້ນໄປ ຫຼື ເປັນຜູ້ຮັບ Medicare, ທ່ານສາມາດໂທຫາ 888-884-8721. ຜູ້ຮ່ວມມືໃນສູນຜູ້ອາວຸໂສ ແລະ ໜ່ວຍງານປະຕິບັດງານທາງຊຸມຊົນຍັງສາມາດໃຫ້ການຊ່ວຍເຫຼືອໄດ້.
- ເພື່ອຊອກຫາການຊ່ວຍເຫຼືອທີ່ຢູ່ໃກ້ທ່ານ, ໃຫ້ເຂົ້າເບິ່ງ staycovered.ri.gov/community-support.

**ຂ້າພະເຈົ້າຈະສາມາດຍື່ນເອກະສານຂອງຂ້າພະເຈົ້າໃຫ້ລັດໄດ້ແນວໃດ?**
ໂດຍເປັນສ່ວນໜຶ່ງຂອງຂະບວນການຕໍ່ສັນຍາ, ລັດອາດຂໍໃຫ້ທ່ານຍື່ນເອກະສານເພີ່ມເຕີມ.
ມີຫຼາຍວິທີທີ່ທ່ານສາມາດເຮັດເຊັ່ນນັ້ນ, ລວມເຖິງທາງອອນລາຍ, ທາງໄປສະນີ ຫຼື ຊ່ອງໜ້າ.

- **ແອັບອອນລາຍ ຫຼື ມືຖື**: ເຂົ້າເບິ່ງ healthyrhode.ri.gov ເພື່ອເຂົ້າເຖິງບັນຊີຂອງທ່ານຜ່ານອອນລາຍ ຫຼື ດາວໂຫຼດແອັບມືຖື HealthyRhode ເທິງສະມາດໂຟນຂອງທ່ານເພື່ອເຂົ້າເຖິງບັນຊີຂອງທ່ານ.
- **ທາງໄປສະນີ:** ທ່ານສາມາດສົ່ງເອກະສານທີ່ຮ້ອງຂໍທາງໄປສະນີໄປທີ່ ຕູ້ໄປສະນີ 8709, Cranston, RI 02920-8787.
- **ຊ່ອງໜ້າ**: ພະນັກງານຢູ່ສຳນັກງານ Rhode Island Department of Human Services (DHS) ສາມາດໃຫ້ການຊ່ວຍເຫຼືອແກ່ລູກຄ້າຊ່ອງໜ້າ. ສຳລັບລາຍຊື່ຫ້ອງການ DHS, ໃຫ້ເຂົ້າເບິ່ງ dhs.ri.gov/about-us/dhs-offices. ທ່ານຍັງສາມາດສົ່ງເອກະສານໂດຍໃຊ້ສູນສະແກນ RI DHS ທີ 1 Reservoir Ave., Providence.

**ແມ່ນຫຍັງຄືພອດທອລຊອກຫາການຕໍ່ສັນຍາ Medicaid?**
ພອດທອລຊອກຫາການຕໍ່ສັນຍາໃໝ່ຂອງ Medicaid ແມ່ນສາມາດໃຊ້ເພື່ອຊອກຫາວັນທີຕໍ່ສັນຍາ Medicaid ທີ່ຄາດການໄວ້ລ່ວງໜ້າຂອງທ່ານ. ພອດທອລແມ່ນສະດວກ ແລະ ປອດໄພ ແລະ ບໍ່ຈຳເປັນຕ້ອງລົງຊື່ເຂົ້າສູ່ລະບົບ. ພອດທອລແມ່ນສາມາດປ່ຽນເປັນພາສາອັງກິດ, ພາສາແອັດສະປາຍ ແລະ ພາສາປອກຕຸຍການ.
ຖ້າມີຄົນທີ່ກຳລັງຊ່ວຍໃຫ້ທ່ານຕໍ່ສັນຍາ, ພວກເຂົາສາມາດໃຊ້ພອດທອລໄດ້ເຊັ່ນດຽວກັນ.
ນີ້ແມ່ນສິ່ງທີ່ທ່ານຈຳເປັນຕ້ອງເຮັດ:

- ປ້ອນໝາຍເລກ ID ສຳລັບ Medicaid ທີ່ຢູ່ເທິງບັດ Anchor ສີຂາວຂອງທ່ານ.
- ປ້ອນວັນເດືອນປີເກີດຂອງທ່ານ.

ພອດທອລຈະແຈ້ງໃຫ້ທ່ານຮັບຊາບເວລາທີ່ທ່ານສາມາດຄາດການວ່າຕ້ອງຕໍ່ສັນຍາໄດ້. ແຕ່ໃຫ້ຈື່ໄວ້ວ່າ ວັນທີຕໍ່ສັນຍາຂອງທ່ານອາດມີການປ່ຽນແປງ ສະນັ້ນໃຫ້ກວດຄືນໃໝ່ຢູ່ເລື້ອຍໆ.

ຫຼັງຈາກທີ່ທ່ານຮູ້ວັນທີຕໍ່ສັນຍາທີ່ຄາດການໄວ້ລ່ວງໜ້າຂອງທ່ານ, ທ່ານສາມາດກຽມພ້ອມ. ທ່ານຄວນ:

- ອັບເດດຂໍ້ມູນຕິດຕໍ່ຂອງທ່ານ.
- ຖ້າຮັບແຈ້ງການສີເຫຼືອງ ຫຼື ສີຂຽວໃນໄປສະນີຂອງທ່ານ.

**ຂ້າພະເຈົ້າພາດກຳນົດເວລາທີ່ລະບຸໃນຊອງເອກະສານຂອງຂ້າພະເຈົ້າ. ຂ້າພະເຈົ້າຄວນເຮັດແນວໃດ?**
ຖ້າທ່ານພາດກຳນົດເວລາທີ່ລະບຸໃນຊອງເອກະສານຕໍ່ສັນຍາສີເຫຼືອງຂອງທ່ານ, ໃຫ້ລົງລາຍເຊັນໃສ່ແບບຟອມຕໍ່ສັນຍາ ແລະ ຍື່ນເອກະສານຂອງທ່ານໃນທັນທີ.
*ຖ້າລັດໄດ້ຮັບຊອງເອກະສານຂອງທ່ານພາຍໃນ 90 ມື້ ນັບຕັ້ງແຕ່ວັນທີທີ່ສິດທິປະໂຫຍດຂອງທ່ານສິ້ນສຸດລົງ (ຕາມແຈ້ງການຄຳຕັດສິນສິດທິປະໂຫຍດຂອງທ່ານ), ເອກະສານຂອງທ່ານຈະຖືກຍອມຮັບ ແລະ ເງື່ອນໄຂສິດຂອງທ່ານຈະໄດ້ຮັບການກວດສອບ.*

- ຖ້າລັດຮັບເອກະສານຂອງທ່ານພາຍໃນ 90 ມື້ ແລະ ຕັດສິນວ່າທ່ານມີສິດສຳລັບ Medicaid, ການຄຸ້ມຄອງຂອງທ່ານຈະຖືກຄືນສິດ. ທ່ານຈະໄດ້ຮັບ Anchor Card ສີຂາວທີ່ທ່ານສາມາດໃຊ້ສຳລັບການກຳກັບຢາ ແລະ ສຳລັບການເຂົ້າພົບທ່ານໝໍ ຖ້າຜູ້ໃຫ້ບໍລິການຍອມຮັບ Medicaid ໂດຍມີຄ່າທຳນຽມສຳລັບການບໍລິການ. ຈາກນັ້ນ, ທ່ານຈະລົງທະບຽນຄືນໃໝ່ໃນແຜນການດູແລເບິ່ງແຍງທີ່ຢູ່ໃນການຄຸ້ມຄອງຂອງທ່ານ (Neighborhood Health Plan of Rhode Island, Tufts Health (RITogether) Plan ຫຼື UnitedHealthcare Community Plan (UHCCP)).
- ຖ້າລັດໄດ້ຮັບເອກະສານຂອງທ່ານພາຍໃນ 90 ມື້ ແລະ ຕັດສິນວ່າທ່ານບໍ່ມີສິດສຳລັບ Medicaid ອີກຕໍ່ໄປ, ທ່ານອາດໄດ້ຮັບຂໍ້ມູນກ່ຽວກັບວິທີການຂໍປະກັນສຸຂະພາບຕົ້ນທຶນຕ່ຳຜ່ານ HealthSource RI. ນອກຈາກນັ້ນ, ແຈ້ງການສິດທິປະໂຫຍດຂອງທ່ານຍັງຈະໃຫ້ຂໍ້ມູນແກ່ທ່ານກ່ຽວກັບວິທີການອຸທອນ.

ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບຕົວເລືອກການຄຸ້ມຄອງຂອງທ່ານໃນຂະນະທີ່ເອກະສານທີ່ສົ່ງຊ້າຂອງທ່ານກຳລັງຖືກກວດສອບ, ກະລຸນາໂທຫາ HealthSource RI (HSRI) ຕັ້ງແຕ່ 8 ໂມງເຊົ້າຫາ 6 ໂມງແລງໃນມື້ລັດຖະການທີ່ໝາຍເລກ 1-855-840-4774.

**ຈະເກີດຫຍັງຂຶ້ນ ຖ້າຂ້າພະເຈົ້າບໍ່ມີສິດສຳລັບ Medicaid ອີກຕໍ່ໄປ?**
ຖ້າທ່ານບໍ່ມີສິດສຳລັບ Medicaid ອີກຕໍ່ໄປ, ທີມງານທີ່ເປັນມິດທີ່ HealthSource RI ສາມາດຊ່ວຍໃຫ້ທ່ານຊອກຫາການຄຸ້ມຄອງການດູແລສຸຂະພາບໃນລາຄາທີ່ຍ່ອມເຍົາ. ໂດຍຂຶ້ນກັບຂະໜາດຄົວເຮືອນ ແລະ ລາຍໄດ້ຂອງທ່ານ, ທ່ານອາດເຂົ້າເກນເງື່ອນໄຂສຳລັບ:

- ການລົງທະບຽນອັດຕະໂນມັດໃນແຜນປະກັນສຸຂະພາບທີ່ມີຄຸນສົມບັດ (QHP) ແລະ ການຊ່ວຍເຫຼືອເບ້ຍປະກັນສອງເດືອນ
- ການຊ່ວຍເຫຼືອເບ້ຍປະກັນສອງເດືອນ ແລະ ເຄຣດິດອາກອນເບ້ຍປະກັນຂອງລັດຖະບານກາງ
- ເຄຣດິດອາກອນເບ້ຍປະກັນຂອງລັດຖະບານກາງເພື່ອຊ່ວຍໃຫ້ການຄຸ້ມຄອງສຸຂະພາບຢູ່ໃນລາຄາຍ່ອມເຍົາຫຼາຍຂຶ້ນ.

***ຂ້າພະເຈົ້າຈະສາມາດຍື່ນການອຸທອນໄດ້ແນວໃດ?***
ມີສອງສາມວິທີທີ່ຈະຮ້ອງຂໍການອຸທອນທີ່ກ່ຽວຂ້ອງກັບການຄຸ້ມຄອງ Medicaid ຂອງທ່ານ.
ທ່ານສາມາດຍື່ນການອຸທອນ:

- **ອອນລາຍ**. ເຂົ້າສູ່ລະບົບບັນຊີຂອງທ່ານທີ່ healthyrhode.ri.gov ແລະ ຄລິກໃສ່ "ຍື່ນການອຸທອນ".
- **ທາງໂທລະສັບ**. ທ່ານສາມາດຍື່ນອຸທອນໂດຍໂທຫາ HealthSource RI ທີ່ໝາຍເລກ 1-855-840-4774.
- **ວ່ອງໜ້າ**. ສໍາລັບລາຍຊື່ຫ້ອງການ DHS, ໃຫ້ເຂົ້າເບິ່ງ dhs.ri.gov/about-us/dhs-offices. ແບບຟອມການອຸທອນແມ່ນລວມໄວ້ໃນແຈ້ງການຄໍາຕັດສິນສິດທິປະໂຫຍດທຸກສະບັບ. ຕື່ມຂໍ້ມູນໃສ່ແບບຟອມສະບັບນີ້ ແລະ ນໍາມັນມາພ້ອມກັບທ່ານ.
- **ທາງໄປສະນີ**. ແບບຟອມການອຸທອນແມ່ນລວມໄວ້ໃນແຈ້ງການຄໍາຕັດສິນສິດທິປະໂຫຍດທຸກສະບັບ. ຕື່ມຂໍ້ມູນໃສ່ແບບຟອມນີ້ ແລະ ສົ່ງໄປທາງໄປສະນີທີ່ ATTN: Appeals State of Rhode Island, P.O. Box 8,709, Cranston, RI 02920-8787.

ຄໍາແນະນໍາກ່ຽວກັບວິທີການຍື່ນການອຸທອນຍັງປະກອບໄວ້ໃນແຈ້ງການຄໍາຕັດສິນສິດທິປະໂຫຍດຂອງທ່ານ.
ສໍາລັບຂໍ້ມູນເພີ່ມເຕີມ, ໃຫ້ເຂົ້າເບິ່ງ staycovered.ri.gov/medicaid-members/file-appeal.

***ເດັກທີ່ເປັນຜູ້ເພິ່ງອາໄສ ແລະ ອາໄສຢູ່ໃນຄົວເຮືອນຂອງຂ້າພະເຈົ້າໄດ້ລົງທະບຽນໃນ Medicaid ໃນລັດ Rhode Island. ຂ້າພະເຈົ້າຄວນເຮັດແນວໃດເພື່ອກຽມພ້ອມສໍາລັບການຕໍ່ສັນຍາຂອງພວກເຂົາ?***
ມີສາມສິ່ງທີ່ທ່ານສາມາດເຮັດເພື່ອໃຫ້ແນ່ໃຈວ່າທ່ານກຽມພ້ອມ ແລະ ຜູ້ເພິ່ງອາໄສຂອງທ່ານຍັງໄດ້ຮັບການຄຸ້ມຄອງ.

1. **ອັບເດດຂໍ້ມູນຕິດຕໍ່ຂອງທ່ານ.** ກວດເບິ່ງໃຫ້ແນ່ໃຈວ່າລັດມີທີ່ຢູ່ປັດຈຸບັນ, ໝາຍເລກໂທລະສັບ ແລະ ອີເມວຂອງທ່ານ ເພື່ອວ່າທ່ານຈະສາມາດໄດ້ຮັບຂໍ້ມູນອັບເດດທີ່ສໍາຄັນກ່ຽວກັບການຄຸ້ມຄອງຂອງທ່ານ.
2. **ຄອຍຖ້າແຈ້ງການສີເຫຼືອງ ຫຼື ສີຂຽວຂອງທ່ານທາງໄປສະນີ.** ລັດອາດແຈ້ງໃຫ້ທ່ານຮັບຊາບວ່າການຄຸ້ມຄອງກໍາລັງຖືກຕໍ່ສັນຍາໂດຍອັດຕະໂນມັດ ຫຼື ຈະຂໍຂໍ້ມູນເພີ່ມເຕີມຈາກທ່ານ.
3. **ດໍາເນີນການ ໃນທັນທີ.** ກະລຸນາສົ່ງແບບຟອມທີ່ລົງລາຍເຊັນແລ້ວຂອງທ່ານ ແລະ ເອກະສານອື່ນໆໃຫ້ລັດຕາມການຮ້ອງຂໍໃຫ້ໄວເທົ່າທີ່ເປັນໄປໄດ້. ທ່ານຕ້ອງສົ່ງເອກະສານຂອງທ່ານໃຫ້ພວກເຮົາພາຍໃນວັນທີທີ່ຢູ່ໃນແຈ້ງການຂອງທ່ານ.

***ການຕໍ່ສັນຍາຂອງຂ້າພະເຈົ້າຈະເກີດຂຶ້ນໃນເມື່ອໃດ?***
ຄົວເຮືອນທີ່ມີລູກ, ເຊິ່ງລວມເຖິງທຸກຄົນທີ່ອາຍຸຕໍ່າກວ່າ 19 ປີ, ແມ່ນຈະໄດ້ຮັບແຈ້ງການທີ່ລະບຸໃຫ້ພວກເຂົາຮັບຊາບວ່າຮອດຜຽນພວກເຂົາໃນການຕໍ່ສັນຍາແລ້ວ. ທ່ານຈະສາມາດດໍາເນີນຕໍ່ສັນຍາການຄຸ້ມຄອງຂອງທ່ານ ຫຼັງຈາກທີ່ທ່ານໄດ້ຮັບໜັງສືນີ້ເທົ່ານັ້ນ. ແຈ້ງການນີ້ຈະສົ່ງໃຫ້ລະຫວ່າງເດືອນທັນວາ 2023 ແລະ ເດືອນເມສາ 2024. ແຈ້ງການຈະສົ່ງໃຫ້ໃນຊ່ວງຕົ້ນເດືອນຢູ່ສະເໝີ. ເພື່ອຊອກຫາວັນທີຕໍ່ສັນຍາ Medicaid ທີ່ຄາດການໄວ້ລ່ວງໜ້າຂອງທ່ານ, ກະລຸນາເຂົ້າເບິ່ງ staycovered.ri.gov ແລະ ໃຊ້ພອດທອລຊອກຫາການຕໍ່ສັນຍາ Medicaid. ທ່ານຍັງສາມາດລົງຊື່ເຂົ້າສູ່ລະບົບບັນຊີຂອງທ່ານທີ່ healthyrhode.ri.gov ແລະ ຊອກຫາ “ຂໍ້ມູນຕໍ່ສັນຍາຂອງຂ້າພະເຈົ້າ”.

***ຄອບຄົວ ຫຼື ຜູ້ປົກຄອງຕາມກົດໝາຍຈະສາມາດໄດ້ຮັບການຊ່ວຍເຫຼືອຊ່ອງໜ້າສຳລັບການຕໍ່ສັນຍາຂອງພວກເຂົາໄດ້ຢູ່ໃສ?***
ພວກເຮົາຮູ້ວ່າ ບາງຄັ້ງ ມັນງ່າຍກວ່າທີ່ຈະລົມຊ່ອງໜ້າກັບຄົນທີ່ສາມາດໃຫ້ການຊ່ວຍເຫຼືອແກ່ທ່ານໄດ້ໃນການຕໍ່ສັນຍາ Medicaid ຂອງທ່ານ. ທ່ານສາມາດໄດ້ຮັບການຊ່ວຍເຫຼືອໂດຍບໍ່ເສຍຄ່າຈາກຜູ້ຊ່ຽວຊານທີ່ຜ່ານການຝຶກອົບຮົມທີ່ຢູ່ໃກ້ທ່ານ. ຜູ້ໃຫ້ຄຳປຶກສາການສະໝັກທີ່ມີໃບຢັ້ງຢືນ (CAC) ແລະ ຜູ້ນຳທາງພ້ອມໃຫ້ການຊ່ວຍເຫຼືອແກ່ທ່ານຢູ່ບ່ອນນີ້. ພວກເຂົາຈະຊ່ວຍໃຫ້ທ່ານຊອກຫາຂໍ້ມູນ ແລະ ຕັດສິນໃຈກ່ຽວກັບການຄຸ້ມຄອງສຸຂະພາບຂອງທ່ານ. ຜູ້ຊ່ຽວຊານເຫຼົ່ານີ້ຈະຊ່ວຍເຫຼືອທ່ານ:

- ເຂົ້າໃຈວ່າຜູ້ໃດສາມາດໄດ້ຮັບ Medicaid (ເງື່ອນໄຂສິດ)
- ຕື່ມຂໍ້ມູນໃສ່ແບບຟອມໃຫ້ຄົບຖ້ວນ
- ຮຽນຮູ້ກ່ຽວກັບການຄຸ້ມຄອງ Medicaid
- ດຳເນີນການຮ້ອງຟ້ອງ ຫຼື ຍື່ນຄຳຮ້ອງທຸກ
- ປົກປ້ອງຕົນເອງຈາກການສໍ້ໂກງ
- ຮຽນຮູ້ກ່ຽວກັບຕົວເລືອກການຄຸ້ມຄອງສຸຂະພາບອື່ນໆ ຖ້າທ່ານບໍ່ມີສິດສຳລັບ Medicaid ອີກຕໍ່ໄປ

ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບການຊ່ວຍເຫຼືອໃນທ້ອງຖິ່ນ, ກະລຸນາເຂົ້າເບິ່ງ staycovered.ri.gov/community-support.

***ຈະເກີດຫຍັງຂຶ້ນກັບການຄຸ້ມຄອງຂອງລູກຂ້າພະເຈົ້າ ຖ້າຂ້າພະເຈົ້າບໍ່ມີສິດສຳລັບ Medicaid ອີກຕໍ່ໄປ?***
ເດັກອາດຍັງມີສິດສຳລັບການຄຸ້ມຄອງ Medicaid ເຖິງແມ່ນວ່າພໍ່ແມ່ ຫຼື ຜູ້ປົກຄອງຕາມກົດໝາຍຂອງພວກເຂົາບໍ່ມີສິດອີກຕໍ່ໄປ. ນີ້ເປັນເພາະເງື່ອນໄຂລາຍໄດ້ຄົວເຮືອນສຳລັບເດັກແມ່ນສູງກວ່າພໍ່ແມ່ ແລະ ຜູ້ດູແລເບິ່ງແຍງຫຼາຍ.

ຖ້າທ່ານ ແລະ/ຫຼື ເດັກທີ່ເປັນຜູ້ເພິ່ງອາໄສໃນຄົວເຮືອນຂອງທ່ານບໍ່ມີສິດສຳລັບ Medicaid ອີກຕໍ່ໄປ, ທີມງານທີ່ເປັນມິດທີ່ HealthSource RI ສາມາດຊ່ວຍໃຫ້ທ່ານຊອກຫາການຄຸ້ມຄອງດູແລເບິ່ງແຍງສຸຂະພາບໃນລາຄາຍ່ອມເຍົາ. ໂດຍຂຶ້ນກັບຂະໜາດຄົວເຮືອນ ແລະ ລາຍໄດ້ຂອງທ່ານ, ທ່ານອາດເຂົ້າເກນເງື່ອນໄຂສຳລັບ:

- ການລົງທະບຽນອັດຕະໂນມັດໃນແຜນປະກັນສຸຂະພາບທີ່ມີຄຸນສົມບັດ (QHP) ແລະ ການຊ່ວຍເຫຼືອເບ້ຍປະກັນສອງເດືອນ
- ການຊ່ວຍເຫຼືອເບ້ຍປະກັນສອງເດືອນ ແລະ ເຄຣດິດອາກອນເບ້ຍປະກັນຂອງລັດຖະບານກາງ
- ເຄຣດິດອາກອນເບ້ຍປະກັນຂອງລັດຖະບານກາງເພື່ອຊ່ວຍໃຫ້ການຄຸ້ມຄອງສຸຂະພາບມີລາຄາທີ່ຍ່ອມເຍົາຫຼາຍຂຶ້ນ

***ທຸກຄົນໃນຄົວເຮືອນຂອງຂ້າພະເຈົ້າຈະຖືກຕໍ່ສັນຍາພ້ອມກັນບໍ?***
ແມ່ນແລ້ວ, ສະມາຊິກ Medicaid ທີ່ອາໄສໃນຄົວເຮືອນດຽວກັນຈະຖືກຕໍ່ສັນຍາພ້ອມກັນ.

***ຂ້າພະເຈົ້າຈຳເປັນຕ້ອງເຮັດຫຍັງຕື່ມອີກເພື່ອຕໍ່ສັນຍາການຄຸ້ມຄອງລູກຂອງຂ້າພະເຈົ້າ ເຊິ່ງແຕກຕ່າງຈາກການຄຸ້ມຄອງຂອງຂ້າພະເຈົ້າເອງບໍ?***
ເດັກບາງຄົນທີ່ເປັນຜູ້ເພິ່ງອາໄສໃນຄົວເຮືອນຂອງທ່ານອາດຖືກຕໍ່ສັນຍາໂດຍອັດຕະໂນມັດດ້ວຍການຕໍ່ສັນຍາແບບລາຍງານການປ່ຽນແປງເທົ່ານັ້ນ. ຖ້າມີບາງຢ່າງປ່ຽນແປງກ່ຽວກັບສະຖານະຜູ້ເພິ່ງອາໄສຂອງທ່ານ, ທ່ານຕ້ອງແຈ້ງໃຫ້ພວກເຮົາຮັບຊາບ. ພໍ່ແມ່ ຫຼື

ຜູ້ດູແລເບິ່ງແຍງບາງຄົນໃນຄົວເຮືອນດຽວກັນອາດຈຳເປັນຕ້ອງສະແດງເອກະສານ ຫຼື ຂໍ້ມູນບາງຢ່າງ. ນີ້ແມ່ນການຕໍ່ສັນຍາແບບຕ້ອງດຳເນີນການ.
ການຕໍ່ສັນຍາທັງສອງປະເພດຈະສະແດງໃນແຈ້ງການຕໍ່ສັນຍາດຽວກັນສຳລັບຄົວເຮືອນ.

**ເດັກ "ມີອາຍຸເກີນເກນ" ຂອງ Medicaid ບໍ່?**
ເມື່ອຄົນໜຸ່ມອາຍຸເຂົ້າ 19 ປີ, ພວກເຂົາບໍ່ມີສິດສຳລັບ Medicaid ໃນຖານະຜູ້ເພິ່ງອາໄສໃນຄົວເຮືອນ Medicaid ອີກຕໍ່ໄປ.
ແຕ່ພວກເຂົາອາດມີສິດສຳລັບການຄຸ້ມຄອງສຸຂະພາບ:

- ໃນໝວດໝູ່ທີ່ແຕກຕ່າງກັນຂອງ Medicaid
- ຜ່ານແຜນປະກັນ HealthSource RI

***ລູກທີ່ອາຍຸ 19 ປີຂອງຂ້າພະເຈົ້າຄວນເຮັດແນວໃດຕໍ່ໄປ?***
ເມື່ອທ່ານໄດ້ຮັບແຈ້ງການຕໍ່ສັນຍາ Medicaid ຂອງທ່ານ, ມັນຈະລະບຸວ່າ "ຕ້ອງດຳເນີນການ".
ປະຕິບັດຕາມຄຳແນະນຳໃນແຈ້ງການຂອງທ່ານເພື່ອລາຍງານການປ່ຽນແປງໃດໜຶ່ງໃນສະຖານະຄົວເຮືອນຂອງທ່ານ. ທ່ານຍັງຈະໄດ້ຮັບແຈ້ງການສີຂາວທີ່ລະບຸວ່າ "ຕ້ອງມີເອກະສານເພີ່ມເຕີມ" (ພວກເຮົາຈະສົ່ງແຈ້ງການນີ້ແຍກຕ່າງຫາກ).

ຢ່າລືມເຊັນໃສ່ແຈ້ງການຕໍ່ສັນຍາສີເຫຼືອຂອງທ່ານ. ກະລຸນາສົ່ງມັນໃຫ້ພວກເຮົາ
ພ້ອມກັບເອກະສານໃດໜຶ່ງທີ່ຕ້ອງມີ, **ກ່ອນວັນທີຄົບກຳນົດ**ໃນແຈ້ງການສີເຫຼືອງຂອງທ່ານ.

***ຈະເກີດຫຍັງຂຶ້ນ ຖ້າຜູ້ເພິ່ງອາໄສຂອງຂ້າພະເຈົ້າຢູ່ໃນການດູແລເບິ່ງແຍງຂອງ DCYF ແຕ່ກໍລະນີຂອງພວກເຂົາບໍ່ມີການເຄື່ອນໄຫວອີກຕໍ່ໄປ?***
ຜູ້ເພິ່ງອາໄສຂອງທ່ານອາດບໍ່ໄດ້ຢູ່ໃນການດູແລເບິ່ງແຍງຂອງ DCYF ອີກຕໍ່ໄປ ເພາະ:

- ພວກເຂົາກັບໄປຢູ່ກັບຄອບຄົວຂອງພວກເຂົາແລ້ວ
- ພວກເຂົາອາຍຸ 18 ປີແລ້ວ

ພວກເຂົາຈະບໍ່ໄດ້ຮັບແຈ້ງການຕໍ່ສັນຍາ Medicaid ສີເຫຼືອງ
ພວກເຂົາຈະໄດ້ຮັບແຈ້ງການສີຂຽວທີ່ແຈ້ງໃຫ້ພວກເຂົາຮັບຊາບວ່າພວກເຂົາບໍ່ມີສິດສຳລັບ Medicaid ອີກຕໍ່ໄປ.

ຖ້າພວກເຂົາຕ້ອງການຮັບການຄຸ້ມຄອງຈາກ Medicaid, ພວກເຂົາຕ້ອງສະໝັກໂດຍຕື່ມຂໍ້ມູນໃສ່ແບບສະໝັກ DHS-2 ເພື່ອຂໍການຊ່ວຍເຫຼືອ ເພື່ອວ່າພວກເຮົາຈະສາມາດຕັດສິນໄດ້ວ່າພວກເຂົາມີສິດ ຫຼື ບໍ່.

***ຂ້າພະເຈົ້າຖືພາ. ຂ້າພະເຈົ້າມີສິດສຳລັບ Medicaid ບໍ່?***
ຄົນຖືພາ ບໍ່ວ່າຈະອາຍຸສ່ຳໃດກໍ່ຕາມທີ່ເຂົ້າເກນເງື່ອນໄຂລາຍໄດ້ ແມ່ນມີສິດສຳລັບ Medicaid
ໃນຂະນະທີ່ພວກເຂົາຖືພາ ແລະ ເປັນເວລາ 12 ເດືອນຫຼັງຈາກທີ່ພວກເຂົາບໍ່ໄດ້ຖືພາອີກຕໍ່ໄປ (ຊ່ວງຫຼັງຄອດ).